# ຂໍ້ຕົກລົງ ຂອງ ລັດຖະມົນຕີ
# ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
# ວ່າດ້ວຍ ການຄຸ້ມຄອງຊິງຊັ່ງທຸກປະເພດ
# ຢູ່ ສປປ ລາວ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ກົມມາດຕະຖານ ແລະ ວັດແທກ

ປີ 2016

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ** ເລກທີ 0544 /ກວຕ

ນະຄອນຫຼວງວຽງຈັນ, ວັນທີ 16 MAY 2017

# ຂໍ້ຕົກລົງ

## ຂອງ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ການຄຸ້ມຄອງຊີງຊັ່ງທຸກປະເພດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ) ເລກທີ 036/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 309/ນຍ, ລົງວັນທີ 28 ກັນຍາ 2011;
- ອີງຕາມການຄົ້ນຄ້ວາສະເໜີຂອງ ກົມມາດຕະຖານ ແລະ ວັດແທກ, ເລກທີ 005/ກວຕ.ກມວ, ລົງວັນທີ 05 ຕຸລາ 2016.

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍ, ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການກວດທຽບ, ສອບທຽບ ແລະ ຈົດທະບຽນ ແລະ ກວດຄືນຊີງຊັ່ງ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ນຳໃຊ້ ແລະ ໃຫ້ການບໍລິການ ຢູ່ ສປປ ລາວ ໃຫ້ມີຄວາມເປັນເອກະພາບ, ບົນພື້ນຖານຄວາມຖືກຕ້ອງ, ຊັດເຈນ ຊື່ງສອດຄ່ອງກັບລະບຽບການຂອງພາກພື້ນ ແລະ ສາກົນ, ແນໃສ່ຊຸກຍູ້, ສົ່ງເສີມການບໍລິການທີ່ມີຄຸນນະພາບ ແລະ ແທດເໝາະກັບສະພາບຄວາມເປັນຈິງ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ຊິງຊັ່ງ**

ຊິງຊັ່ງ ແມ່ນອຸປະກອນວັດແທກຊະນິດໜຶ່ງທີ່ໃຊ້ສຳລັບຊັ່ງມວນສານຂອງວັດຖຸ ແລະ ສິ່ງຂອງຕ່າງໆ ເພື່ອຊີ້ບອກນ້ຳໜັກໃນເວລາຊື້, ຂາຍ, ແລກປ່ຽນສິນຄ້າ ແລະ ການບໍລິການອື່ນໆເຊິ່ງມີຫົວໜ່ວຍພື້ນຖານການວັດແທກເປັນ ກິໂລກຼາມ (kg).

**ມາດຕາ 3 ການອະທິບາຍຄຳສັບ**

1. **ມວນສານ (m)** ໝາຍເຖິງ ນ້ຳໜັກ ມີຫົວໜ່ວຍພື້ນຖານວັດແທກເປັນ ກິໂລກຼາມ (kg);
2. **ຄ່າການເຕັ້ນຂອງຊິງຊັ່ງ** (e) ຫຼື (d) ໝາຍເຖິງ ການເຄື່ອນຍ້າຍ (ເພີ່ມຂຶ້ນ ຫຼື ຫຼຸດລົງ) ຂອງມວນສານວັດຖຸຈາກຈຸດໜຶ່ງຫາອີກຈຸດໜຶ່ງເທິງໜ້າຈໍຂອງຊິງຊັ່ງໃນເວລາຊັ່ງວັດຖຸ ມີຫົວໜ່ວຍພື້ນຖານ ວັດແທກເປັນ ກິໂລກຼາມ **(kg);**
3. **ຊິງຊັ່ງແບບອານາລັອກ** ໝາຍເຖິງ ຊິງຊັ່ງທີ່ບໍ່ໃຊ້ໄຟຟ້າ;
4. **ຊິງຊັ່ງແບບດີຈີຕອນ** ໝາຍເຖິງຊິງຊັ່ງທີ່ໃຊ້ໄຟຟ້າ;
5. **ອຸປະກອນວັດແທກ** ໝາຍເຖິງ ເຄື່ອງມືທີ່ໃຊ້ເພື່ອດຳເນີນການວັດແທກ ຊຶ່ງປະກອບດ້ວຍເຄື່ອງດຽວ ຫຼື ນຳໃຊ້ກັບອຸປະກອນເສີມອື່ນໆ;
6. **ຂັ້ນຄວາມທ່ຽງ** ໝາຍເຖິງ ຂັ້ນຄວາມຖືກຕ້ອງ ແລະ ຊັດເຈນ;
7. **ສັນຍາລັກປະທັບຕາໃສ່ອຸປະກອນວັດແທກ** ໝາຍເຖິງ ສັນຍາລັກທີ່ປົກປ້ອງອຸປະກອນວັດແທກເພື່ອບໍ່ໃຫ້ມີການປ່ຽນແປງ, ດັດແກ້, ຖອດຖອນສ່ວນໃດສ່ວນໜຶ່ງ ຫຼື ຫຼາຍສ່ວນອອກ;
8. **ກາໝາຍການກວດຄືນ** ໝາຍເຖິງ ສັນຍາລັກທີ່ໃຊ້ກັບເຄື່ອງມື ແລະ ອຸປະກອນວັດແທກທີ່ຢັ້ງຢືນເຖິງຄວາມຖືກຕ້ອງຂອງເຄື່ອງມື ແລະ ອຸປະກອນວັດແທກທີ່ໄດ້ຜ່ານການກວດກາແລ້ວ;
9. **ໃບຢັ້ງຢືນ** ໝາຍເຖິງ ເອກະສານທີ່ຢັ້ງຢືນເຖິງຜົນການກວດຄືນ;
10. **ອົງການຄຸ້ມຄອງການວັດແທກ** ໝາຍເຖິງ ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນ ແລະ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ ທີ່ໄດ້ຮັບການມອບໝາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດກ່ຽວກັບຊິງຊັ່ງທຸກປະເພດຢູ່ ສປປ ລາວ.

**ມາດຕາ 5. ຫຼັກການພື້ນຖານຂອງການຄຸ້ມຄອງຊິງຊັ່ງ**

ການຄຸ້ມຄອງຊິງຊັ່ງ ແມ່ນການກວດທຽບ, ສອບທຽບ ແລະ ຈົດທະບຽນ ແລະ ກວດຄືນຊິງຊັ່ງເພື່ອຍົກສູງຄຸນນະພາບ ແລະ ປະສິດທິພາບທາງດ້ານເສດຖະກິດ-ສັງຄົມ ກ່ຽວກັບການຄຸ້ມຄອງ, ບໍລິການ ແລະ ປົກປ້ອງຜູ້ຊົມໃຊ້ ບົນພື້ນຖານຫຼັກການ ດັ່ງນີ້:

1. ຕອບສະໜອງຄວາມຮຽກຮ້ອງຕ້ອງການ ແລະ ຮັບປະກັນການນຳໃຊ້ທີ່ຖືກຕ້ອງ ແລະ ເໝາະສົມ;
2. ຮັບປະກັນ ການເປີດກວ້າງ, ຄວາມຍຸຕິທຳ, ສະເໝີພາບ ແລະ ໂປ່ງໃສ, ສາມາດກວດສອບໄດ້, ຫຼີກເວັ້ນການຈຳແນກ ສ້າງອຸປະສັກຕໍ່ທຸລະກິດ ແລະ ຜູ້ຊົມໃຊ້ຊີງຊັ່ງ;
3. ຊີງຊັ່ງທີ່ນຳເຂົ້າ, ສົ່ງອອກ, ນຳໃຊ້ ແລະ ບໍລິການຕ້ອງໄດ້ຮັບການຈົດທະບຽນ, ສອບທຽບຄວາມຖືກຕ້ອງຈາກອົງການທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງກັບຫຼັກການ ໃນການຄຸ້ມຄອງມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
4. ຮັບປະກັນຄວາມສອດຄ່ອງຕາມລະບຽບກົດໝາຍ ແລະ ສະພາບຄວາມເປັນຈິງໃນການຊົມໃຊ້ຊີງຊັ່ງ.

## ໝວດທີ 2
## ສິດ ແລະ ພັນທະ

### ມາດຕາ 6 ສິດຂອງຜູ້ດຳເນີນທຸລະກິດ

ຜູ້ດຳເນີນທຸລະກິດກ່ຽວກັບຊີງຊັ່ງມີສິດ ດັ່ງນີ້:

1. ໂຄສະນາເຜີຍແຜ່ ມາດຕະຖານ, ຄຸນນະພາບຊີງຊັ່ງຂອງຕົນ ພາຍຫຼັງໄດ້ຮັບການຢັ້ງຢືນການສອບທຽບ;
2. ຮ້ອງຂໍຄວາມເປັນທຳຕໍ່ອົງການຄຸ້ມຄອງລັດທີ່ກ່ຽວຂ້ອງ ຫາກເຫັນວ່າການສອບທຽບ ແລະ ກວດຄືນ ບໍ່ໄດ້ຮັບຄວາມຍຸຕິທຳ;
3. ສະເໜີໃຫ້ອົງການຄຸ້ມຄອງຂອງລັດທີ່ກ່ຽວຂ້ອງລົງກວດຄືນ ຖ້າເຫັນວ່າຊີງຊັ່ງນັ້ນມີຄວາມຜິດປົກກະຕິ;
4. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 7 ສິດຂອງຜູ້ຊົມໃຊ້

ຜູ້ຊົມໃຊ້ຊີງຊັ່ງມີສິດ ດັ່ງນີ້:

1. ຮ້ອງຮຽນຕໍ່ພາກສ່ວນທີ່ກ່ຽວຂ້ອງ ເມື່ອເຫັນວ່າການໃຊ້ບໍລິການບໍ່ໄດ້ຮັບຄວາມເປັນທຳ ແລະ ບໍ່ສອດຄ່ອງກັບມາດຕະຖານຄວາມຊັດເຈນຂອງຊີງຊັ່ງ;
2. ສະເໜີຕໍ່ຜູ້ໃຫ້ບໍລິການເພື່ອມາກວດກາ ຫຼື ປ່ຽນອອກ ເມື່ອເຫັນວ່າຊີງຊັ່ງ ເປ່ເພ ຫຼື ຄ່າການຊັ່ງນັ້ນບໍ່ຖືກຕ້ອງ;
3. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 8 ພັນທະຂອງຜູ້ດຳເນີນທຸລະກິດກ່ຽວກັບ

ຜູ້ດຳເນີນທຸລະກິດກ່ຽວກັບຊີງຊັ່ງມີພັນທະ ດັ່ງນີ້:

1. ກ່ອນການນຳເຂົ້າ ຕ້ອງໄດ້ນຳເອົາຕົວຢ່າງຊິງຊັ່ງໄປກວດທຽບ ຢັ້ງຢືນຄວາມຖືກຕ້ອງຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງກັບມາດຕະຖານ;
2. ຮັກສາການກວດທຽບອຸປະກອນຊິງຊັ່ງທີ່ກ່ຽວຂ້ອງ ເພື່ອໃຫ້ສອດຄ່ອງ ຕາມລະບົບຫົວໜ່ວຍສາກົນ (SI) International System of Unit;
3. ທົດສອບ, ກວດສອບຄວາມຖືກຕ້ອງ, ຕິດຕັ້ງ ແລະ ບຳລຸງຮັກສາພາຫະນະກວດທຽບຊິງຊັ່ງທີ່ໄດ້ຖືກຮັບຮອງຈາກອົງການທີ່ເຊື່ອຖືໄດ້;
4. ຊິງຊັ່ງທີ່ຕິດຕັ້ງ ແລະ ໃຫ້ບໍລິການຢູ່ຕາມຕະຫຼາດ, ອາຄານສະຖານທີ່ຕ່າງໆຂອງພາກສ່ວນລັດ ຫຼື ເອກະຊົນ ຕ້ອງມີສັນຍາລັກ ແລະ ປະທັບຕາຢັ້ງຢືນການສອບທຽບ ຈາກອົງການທີ່ກ່ຽວຂ້ອງ;
5. ນຳເອົາຊິງຊັ່ງຂອງຕົນໄປສອບທຽບ ແລະ ຈົດທະບຽນຄວາມຖືກຕ້ອງ ກ່ອນນຳໃຊ້ ແລະ ໃຫ້ການບໍລິການ;
6. ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການວັດແທກຮູ້ລ່ວງໜ້າຢ່າງຊ້າ 1 ເດືອນ ກ່ອນໃບຢັ້ງຢືນຊິງຊັ່ງຂອງຕົນຈະໝົດອາຍຸ;
7. ຜູ້ດຳເນີນທຸລະກິດຕ້ອງໄດ້ກວດສອບຄວາມຖືກຕ້ອງຊິງຊັ່ງຂອງຕົນທຸກໆຄັ້ງກ່ອນການນຳໃຊ້;
8. ຮັບຜິດຊອບຜົນເສຍຫາຍ ທີ່ເກີດຂຶ້ນຈາກຊິງຊັ່ງຂອງຕົນທີ່ບໍ່ໄດ້ມາດຕະຖານ;
9. ຮັບຜິດຊອບຊິງຊັ່ງທີ່ເປ່ເພຫຼັງຈາກການຕິດຕັ້ງ ຫຼື ນຳໃຊ້;
10. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ໃນເວລາກວດສອບ, ສອບທຽບ ແລະ ກວດຄືນແຕ່ລະຄັ້ງ;
11. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 9 ພັນທະຜູ້ຊົມໃຊ້**

ຜູ້ຊົມໃຊ້ຊິງຊັ່ງມີພັນທະ ດັ່ງນີ້:

1. ນຳໃຊ້ການບໍລິການ ໂດຍປະຕິບັດຕາມຄຳແນະນຳຂອງຜູ້ໃຫ້ການບໍລິການ;
2. ຮັບຜິດຊອບຜົນເສຍຫາຍ ທີ່ເກີດຂຶ້ນຈາກການລັກດັດແປງຊິງຊັ່ງ;
3. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 3
## ອົງການຄຸ້ມຄອງ ແລະ ຢັ້ງຢືນຄວາມຖືກຕ້ອງຊິງຊັ່ງ

**ມາດຕາ 10 ອົງການຄຸ້ມຄອງ ແລະ ຢັ້ງຢືນຄວາມຖືກຕ້ອງ**

ອົງການຄຸ້ມຄອງ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຊິງຊັ່ງແມ່ນ ກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຕາມການມອບໝາຍ ຫຼື ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 11 ສິດຂອງອົງການຄຸ້ມຄອງ ແລະ ຢັ້ງຢືນຄວາມຖືກຕ້ອງ**

1. ຄຸ້ມຄອງລະບົບການກວດທຽບ, ສອບທຽບ ແລະ ກວດຄືນຄວາມຖືກຕ້ອງຂອງຊິງຊັ່ງໃຫ້ສອດຄ່ອງຕາມມາດຕະຖານ, ລະບຽບການເຕັກນິກແຫ່ງຊາດ ແລະ ຂໍ້ກຳນົດຂອງພາກພື້ນ ແລະ ສາກົນທີ່ກຳນົດໄວ້;
2. ນຳເອົາຕົວຢ່າງຊິງຊັ່ງ ໄປກວດກາຄຸນນະພາບ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ກ່ອນການນຳເຂົ້າ, ສົ່ງອອກ, ນຳໃຊ້ ແລະ ບໍລິການ;
3. ອອກໃບຢັ້ງຢືນການກວດທຽບ, ສອບທຽບ ແລະ ກວດຄືນຊິງຊັ່ງ ພາຍຫຼັງໄດ້ຮັບການກວດກາຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
4. ພາຍຫຼັງການກວດກາຄືນຄວາມຖືກຕ້ອງຂອງຊິງຊັ່ງແລ້ວ ຖ້າເຫັນວ່າບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສັ່ງໂຈະຊົ່ວຄາວ ການນຳເຂົ້າ, ສົ່ງອອກ, ຜະລິດ ແລະ ໃຫ້ບໍລິການຊິງຊັ່ງ ເພື່ອລາຍງານຂັ້ນເທິງພິຈາລະນາແກ້ໄຂ.

**ມາດຕາ 12 ໜ້າທີ່ຂອງອົງການຄຸ້ມຄອງ ແລະ ຢັ້ງຢືນຄວາມຖືກຕ້ອງ**

1. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດຄືນຊິງຊັ່ງ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;
2. ຍຸຕິທຳ, ໂປ່ງໃສ, ສະເໝີພາບ ແລະ ມີຄວາມບໍລິສຸດໃນໜ້າທີ່ຄວາມຮັບຜິດຊອບ;
3. ແນະນຳຜູ້ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ໃຫ້ການບໍລິການ ກ່ຽວກັບຂັ້ນຕອນການແຈ້ງເອກະສານຂໍອະນຸຍາດໃນການກວດທຽບ, ສອບທຽບ ແລະ ກວດຄືນຊິງຊັ່ງ;
4. ເກັບຮັກສາ ແລະ ສະໜອງຂໍ້ມູນຕ່າງໆໃຫ້ພາກສ່ວນກ່ຽວຂ້ອງ ກ່ຽວກັບວຽກງານການຄຸ້ມຄອງຊິງຊັ່ງ;
5. ອອກໃບຢັ້ງຢືນການກວດທຽບ, ສອບທຽບ ແລະ ກວດຄືນ ຊິງຊັ່ງທີ່ໄດ້ຜ່ານການກວດກາຄວາມຖືກຕ້ອງ;
6. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 4

## ລະບົບເອກະສານ, ຫຼັກການກວດກາ ແລະ ການຢັ້ງຢືນຄວາມຖືກຕ້ອງ

### ມາດຕາ 13 ເອກະສານຂໍຈົດທະບຽນ ແລະ ກວດຄືນ

ເອກະສານປະກອບຂໍຈົດທະບຽນ ແລະ ກວດຄືນຄວາມຖືກຕ້ອງຂອງຊິງຊັ່ງ ມີດັ່ງນີ້:

1. ໃບສະເໜີ;
2. ສຳເນົາເອກະສານ ການປະກອບທຸລະກິດ;
3. ສຳເນົາເອກະສານການຂໍຜະລິດ, ນຳເຂົ້າ ແລະ ສົ່ງອອກ ແລະ ບໍລິການ;
4. ໃບຢັ້ງຢືນຄຸນນະພາບຈາກຕົ້ນທາງ;
5. ເອກະສານອື່ນໆທີ່ກ່ຽວຂ້ອງ (ຖ້າຈຳເປັນ).

### ມາດຕາ 14 ການພິຈາລະນາ ແລະ ອະນຸມັດເອກະສານ

1. ເອກະສານເພື່ອຂໍການກວດທຽບ, ສອບທຽບ ແລະ ກວດຄືນຂອງຊິງຊັ່ງ ຈະໄດ້ຮັບການພິຈາລະນາຢ່າງຊ້າບໍ່ເກີນສິບວັນລັດຖະການ ນັບແຕ່ວັນໄດ້ຮັບໃບສະເໜີເປັນຕົ້ນໄປ;
2. ພາຍຫຼັງເອກະສານຖືກຕ້ອງ, ຄົບຖ້ວນ ແລະ ໄດ້ຜ່ານການກວດກາຄວາມຖືກຕ້ອງຂອງຊິງຊັ່ງທີ່ສອດຄ່ອງຕາມມາດຕະຖານແຫ່ງຊາດແລ້ວ ຕ້ອງອອກໃບຢັ້ງຢືນຜົນຂອງຄວາມຖືກຕ້ອງຢ່າງຊ້າບໍ່ໃຫ້ເກີນ ຫ້າວັນລັດຖະການ.

### ມາດຕາ 15 ການອອກໃບຢັ້ງຢືນ ຜົນການກວດທຽບ, ສອບທຽບ ແລະ ກວດຄືນ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ການຈັດຕັ້ງທີ່ດຳເນີນທຸລະກິດກ່ຽວກັບຊິງຊັ່ງຢູ່ໃນ ສປປ ລາວ ກ່ອນຈະນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ບໍລິການຕ້ອງໄດ້ຜ່ານການກວດທຽບ, ສອບທຽບ ແລະ ກວດຄືນຄວາມຖືກຕ້ອງ ຈາກກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ ແລະ ນະຄອນຫຼວງຕາມການມອບໝາຍ.

ການຈົດທະບຽນ ຊິງຊັ່ງແມ່ນໄດ້ອອກໃຫ້ພຽງເທື່ອດຽວໂດຍບໍ່ມີກຳນົດ, ສ່ວນອາຍຸຂອງການຢັ້ງຢືນການກວດຄືນແມ່ນໃຊ້ໄດ້ 01 ປີ ນັບແຕ່ມື້ກວດຄືນເປັນຕົ້ນໄປ.

### ມາດຕາ 16 ການເກັບຄ່າທຳນຽມ ແລະ ມາດຕະການປັບໃໝ

ການກວດທຽບ, ສອບທຽບ ແລະ ຈົດທະບຽນ ແລະ ການກວດຄືນຊິງຊັ່ງຕ້ອງໄດ້ເສຍຄ່າທຳນຽມ, ຄ່າບໍລິການ ແລະ ມາດຕະການປັບໃໝ ດັ່ງນີ້:

1. ຄ່າທຳນຽມ ແມ່ນອີງຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານການວັດແທກທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ຄ່າປັບໃໝແມ່ນ ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍມາດຕະການ ແລະ ການປັບໃໝຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບມາດຕະຖານ ແລະ ການວັດແທກ.

### ມາດຕາ 17 ຫຼັກການການກວດທຽບ, ສອບທຽບ ແລະ ການກວດຄືນ

ການດຳເນີນການກວດທຽບ, ສອບທຽບ ແລະ ການກວດຄືນຊິງຊັ່ງມີຫຼັກການ ດັ່ງນີ້:

1. ການດຳເນີນການກວດຄືນ ທຸກຄັ້ງທີ່ພະນັກງານລົງກວດຄືນ ແມ່ນຕ້ອງແຈ້ງບັດພະນັກງານທີ່ອອກໃຫ້ໂດຍ ກົມມາດຕະຖານ ແລະ ວັດແທກ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ແລະ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີເມືອງ ທີ່ຖືກມອບໝາຍ; ສົ່ງຕົວຢ່າງຊິງຊັ່ງທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າມາໃໝ່ ຈຳນວນ 10% ສົ່ງໃຫ້ແກ່ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອສອບທຽບຄືນ;
2. ໃນເວລາລົງກວດຕົວຈິງ ພະນັກງານທີ່ກ່ຽວຂ້ອງ ຫາກເຫັນວ່າການກວດຄືນ ຖືກຕ້ອງຕາມລະບຽບການແລ້ວ ພະນັກງານທີ່ກ່ຽວຂ້ອງຕ້ອງໄດ້ອອກຜົນການກວດຄືນຄຸນນະພາບ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງຊິງຊັ່ງ;
3. ໃນກໍລະນີ ຜົນການກວດຄືນບໍ່ຖືກຕ້ອງຕາມມາດຕະຖານແຫ່ງຊາດ ແລະ ພາກພື້ນ, ພະນັກງານທີ່ເຮັດໜ້າທີ່ ຕ້ອງສັ່ງໂຈະການນຳເຂົ້າ, ສົ່ງອອກ ແລະ ບໍລິການຊົ່ວຄາວ ເພື່ອລາຍງານຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງແກ້ໄຂ.

**ມາດຕາ 18 ຮູບແບບ ແລະ ກຳນົດເວລາ ການກວດຄືນ**

ການກວດຄືນ ແລະ ກຳນົດເວລາ ການກວດຄືນຊິງຊັ່ງມີ 03 ຮູບແບບ ດັ່ງລຸ່ມນີ້:

1. ການກວດຄືນກ່ອນການນຳໃຊ້ ແລະ ບໍລິການ, ແມ່ນການກວດກາຊິງຊັ່ງທຸກໆໜ່ວຍທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າ ຕ້ອງໄດ້ຜ່ານການສອບທຽບຄວາມຖືກຕ້ອງ;
2. ກວດຄືນຊິງຊັ່ງຕາມແຜນປົກກະຕິ ແມ່ນ 01 ປີ/ຄັ້ງ;
3. ການກວດຄືນ ແບບກະທັນຫັນ ແມ່ນຈະໄດ້ມີການກວດຄືນໂດຍບໍ່ໄດ້ກຳນົດເວລາ ແລະ ບໍ່ໄດ້ແຈ້ງໃຫ້ຜູ້ດຳເນີນທຸລະກິດຮູ້ລ່ວງໜ້າ.

## ໝວດ 5
## ປະເພດ ແລະ ຄຸນລັກສະນະຂອງຊິງຊັ່ງ

**ມາດຕາ 19 ປະເພດຂອງຊິງຊັ່ງ**

ປະເພດຂອງຊິງຊັ່ງທີ່ນຳໃຊ້ຢູ່ ສປປ ລາວ ມີດັ່ງນີ້:

- ຊິງຊັ່ງແບບອານາລັອກ;
- ຊິງຊັ່ງແບບດີຈິຕອນ.

**ມາດຕາ 20 ສ່ວນປະກອບຂອງຊິງຊັ່ງ**

1. ຊິງຊັ່ງແບບອານາລັອກ ມີສ່ວນປະກອບຕົ້ນຕໍ ດັ່ງນີ້: ເຮືອນຊິງ, ໜ້າຊິງ, ຜາງຊິງ, ເຂັມຊິງ, ບ່ອນຕັ້ງສູນ, ຕົວເລກຊີ້ບອກຫົວໜ່ວຍພື້ນຖານ ກິໂລກຼາມ (kg), ລູກດິ່ງຕັ້ງຄວາມທ່ຽງ, ລັອກປັບຊິງ ແລະ ສະປິງ;

2. ຊິງຊັ່ງແບບດີຈີຕອນ ມີສ່ວນປະກອບຕົ້ນຕໍ ດັ່ງນີ້: ເຮືອນຊິງ, ໜ້າຈໍອ່ານຕົວເລກ, ຜາງຊິງ, ບ່ອນປັບຕົວເລກ, ແຜ່ນວົງຈອນໄຟຟ້າ, ບ່ອນປັບນ້ຳທ່ຽງ ແລະ ບ່ອນຕັ້ງສູນ.

### ມາດຕາ 21 ຂັ້ນຄວາມຊັດເຈນຂອງຊິງຊັ່ງ

ຂັ້ນຄວາມຊັດເຈນຂອງຊິງຊັ່ງ ປະກອບມີ:

- ຊິງຊັ່ງຂັ້ນໜຶ່ງ (I) ໝາຍເຖິງ ຂັ້ນຄວາມຖືກຕ້ອງພິເສດ;
- ຊິງຊັ່ງຂັ້ນສອງ (II) ໝາຍເຖິງ ຂັ້ນຄວາມຖືກຕ້ອງສູງສຸດ;
- ຊິງຊັ່ງຂັ້ນສາມ (III) ໝາຍເຖິງ ຂັ້ນຄວາມຖືກຕ້ອງປານກາງ;
- ຊິງຊັ່ງຂັ້ນສີ່ (IV) ໝາຍເຖິງ ຂັ້ນຄວາມຖືກຕ້ອງທຳມະດາ.

ລາຍລະອຽດ ດັ່ງນີ້:

| ຂັ້ນ ຄວາມຊັດເຈນ | ຄ່າການເຕັ້ນຂອງຊິງ (e) | ການຊອກຫາຂັ້ນຂອງຊິງ (n=Max/e) | | ຄ່າການຊັ່ງຕ່ຳສຸດ (Min) |
|---|---|---|---|---|
| | | ຈຳນວນຕ່ຳສຸດ | ຈຳນວນສູງສຸດ | |
| ຂັ້ນ I | ແຕ່ 0.001 ກຼ ຂຶ້ນໄປ<br>(0.001 ກຼ ≤ e) (*) | 50 000<br>(**) | - | 100e |
| ຂັ້ນ II | ແຕ່ 0.001 ກຼ ເຖິງ 0.05 ກຼ<br>(0.001 ກຼ ≤ e ≤ 0.05 ກຼ)<br>ແຕ່ 0.1 ກຼ ຂຶ້ນໄປ<br>(0.1 ກຼ ≤ e) | 100<br>5 000 | 100 000<br>100 000 | 20e<br>50e |
| ຂັ້ນ III | ແຕ່ 0.1 ກຼ ເຖິງ = 2 ກຼ<br>(0.1 ກຼ ≤ e ≤ 2 ກຼ)<br>ແຕ່ 5 ກຼ ຂຶ້ນໄປ<br>(5 ກຼ ≤ e) | 100<br>500 | 10 000<br>10 000 | 20e<br>20e |
| ຂັ້ນ IV | ແຕ່ 5 ກຼ ຂຶ້ນໄປ<br>(5 ກຼ ≤ e) | 100 | 1 000 | 10e |

**ໝາຍເຫດ:** (*) ປົກກະຕິຈະບໍ່ສອບທຽບ ແລະ ກວດຄືນຊິງຊັ່ງທີ່ມີຄ່າ e ‹ 1 mg ເນື່ອງຈາກວ່າຄ່າອະນຸຍາດຜິດດ່ຽງ ຂອງນ້ຳໜັກກວດສອບນັ້ນນ້ອຍສຸດແລ້ວ;

(**) ສຳລັບຊິງຊັ່ງຂັ້ນ I ທີ່ມີຄ່າການເຕັ້ນ d ‹ 0,1 mg

n ອາດຈະນ້ອຍກວ່າ 50.000

n ແມ່ນການຊອກຫາຂັ້ນຂອງຊິງ.

### ມາດຕາ 22 ສະຫຼາກ ແລະ ເຄື່ອງໝາຍ

ຊິງຊັ່ງທີ່ຖືກຕ້ອງທຸກໜ່ວຍ ຕ້ອງມີສະຫຼາກແນະນຳ ເພື່ອແຈ້ງຂໍ້ມູນຕ່າງໆຂອງຊິງ, ການລະບຸຂໍ້ຄວາມ ຕ້ອງຊັດເຈນ, ຈະແຈ້ງດີ ແລະ ມີຂໍ້ຄວາມດັ່ງລຸ່ມນີ້:

1. ຊື່ ຫຼື ເຄື່ອງໝາຍການຄ້າ ຂອງຜູ້ຜະລິດ;
2. ຊື່ ແລະ ທີ່ຢູ່ຂອງໂຮງງານຜະລິດ ຫຼື ບໍລິສັດ ຜູ້ຜະລິດ, ຜູ້ນໍາເຂົ້າ ຫຼື ຜູ້ຈໍາໜ່າຍ;
3. ເລກໝາຍຂອງເຄື່ອງ;
4. ຍີ່ຫໍ້ ຫຼື ລຸ້ນ;
5. ຈຸດອ່ານຊີ້ບອກນໍ້າໜັກທີ່ຊັ່ງໄດ້;
6. ຂໍ້ແນະນໍາວິທີການນໍາໃຊ້;
7. ຄ່າຄວາມຊັດເຈນ;
8. ປີຜະລິດ;
9. ຄວາມສາມາດຊັ່ງໄດ້, ຄ່າການອ່ານລະອຽດຂອງຊິງ e ຫຼື d;
10. ສໍາລັບຊິງທີ່ໃຊ້ບໍລິການ ຊື້-ຂາຍທົ່ວໄປຕ້ອງເປັນຊິງສອງໜ້າ;
11. ກາໝາຍຢັ້ງຢືນເຖິງຄວາມຖືກຕ້ອງຂອງຊິງ.

**ມາດຕາ 23 ການອະນຸຍາດຄ່າຜິດດ່ຽງຂອງຊິງຊັ່ງ**

ການອະນຸຍາດ ຄ່າຜິດດ່ຽງຂອງຊິງຊັ່ງແຕ່ລະຂັ້ນ ມີດັ່ງນີ້:

| ຄ່າອະນຸຍາດຜິດດ່ຽງ | ນໍ້າໜັກທີ່ໃຊ້ກວດສອບ (m) ສະແດງໃນຫົວໜ່ວຍຄ່າການເຕັ້ນຂອງຊິງ (e) | | | |
|---|---|---|---|---|
| | ຂັ້ນ I | ຂັ້ນ II | ຂັ້ນ III | ຂັ້ນ IV |
| ±0.5 e | ແຕ່ 0 ເຖິງ 50000<br>($0 \leq m \leq 50000$) | ແຕ່ 0 ເຖິງ 5000<br>($0 \leq m \leq 5000$) | ແຕ່ 0 ເຖິງ 500<br>($0 \leq m \leq 500$) | ແຕ່ 0 ເຖິງ 50<br>($0 \leq m \leq 50$) |
| ±1.0 e | ຫຼາຍກວ່າ 50000 ເຖິງ 200000<br>($50000 < m \leq 200000$) | ຫຼາຍກວ່າ 5000 ເຖິງ 20000<br>($5000 < m \leq 20000$) | ຫຼາຍກວ່າ 500 ເຖິງ 2000<br>($500 < m \leq 2000$) | ຫຼາຍກວ່າ 50 ເຖິງ 200<br>($50 \leq m \leq 200$) |
| ±1.5 e | ຫຼາຍກວ່າ 200000<br>($200000 < m$) | ຫຼາຍກວ່າ 20000 ເຖິງ 100000<br>($20000 < m \leq 100000$) | ຫຼາຍກວ່າ 2000 ເຖິງ 10000<br>($2000 < m \leq 10000$) | ຫຼາຍກວ່າ 200 ເຖິງ 1000<br>($200 < m \leq 1000$) |

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ**

ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ມີດັ່ງນີ້:

1. ລັກໂລບ, ປອມແປງ, ດັດແກ້ເຄື່ອງມື ແລະ ອຸປະກອນ ທີ່ກ່ຽວຂ້ອງກັບຊິງຊັ່ງ;
2. ນໍາໃຊ້ຊິງຊັ່ງ ທີ່ບໍ່ໄດ້ຜ່ານການກວດກາ ຫຼື ຕິດກາໝາຍຢັ້ງຢືນຈາກອົງການຄຸ້ມຄອງການວັດແທກ;
3. ນໍາໃຊ້ຊິງຊັ່ງທີ່ຕິດຕັ້ງບໍ່ທ່ຽງຕົງ;

4. ຂັດຂວາງການປະຕິບັດວຽກງານ ຂອງເຈົ້າໜ້າທີ່ລົງກວດຄືນ ແລະ ກວດກາວຽກງານວັດແທກ, ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ກວດຄືນ;
5. ປອມແປງເອກະສານການຢັ້ງຢືນ ທີ່ກ່ຽວກັບຊີງຊັ່ງ;
6. ມີພຶດຕິກຳອື່ນໆທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 25 ຂໍ້ຫ້າມ ສຳລັບພະນັກງານທີ່ປະຕິບັດໜ້າທີ່**

ຫ້າມພະນັກງານ ທີ່ປະຕິບັດໜ້າທີ່ ກວດທຽບ, ສອບທຽບ ແລະ ກວດຄືນ ມີດັ່ງນີ້:

1. ຜູ້ທີ່ບໍ່ໄດ້ຮັບການແຕ່ງຕັ້ງລົງປະຕິບັດໜ້າທີ່ໂດຍພາລະການ;
2. ປະລະໜ້າທີ່ ໂດຍບໍ່ມີຄວາມຮັບຜິດຊອບ;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງຕໍ່ບຸກຄົນ ຫຼື ການຈັດຕັ້ງ;
4. ຮັບສິນບົນ ຫຼື ສວຍໃຊ້ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;
5. ປອມແປງ, ແກ່ຍາວເວລາ ແລະ ຖ່ວງດຶງເອກະສານການຢັ້ງຢືນ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 26 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີດັ່ງນີ້:

1. ສ້າງອຸປະສັກກີດຂວາງ ແລະ ແຊກແຊງການເຮັດວຽກຂອງພະນັກງານທີ່ຮັບຜິດຊອບການກວດກາ;
2. ໂຄສະນາ, ສົ່ງເສີມຊີງຊັ່ງ ທີ່ບໍ່ໄດ້ຄຸນນະພາບ;
3. ສ້າງມົນລະພິດຕໍ່ສະພາບແວດລ້ອມ ແລະ ສັງຄົມ;
4. ຊ່ວຍເຫຼືອ ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້;
5. ປົດບັງ ເຊື່ອງອຳການກະທຳທີ່ເປັນການລະເມີດລະບຽບກົດໝາຍ;
6. ມີພຶດຕິກຳອື່ນທີ່ຜິດກັບລະບຽບກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຮ່ວມມື, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງການວັດແທກ ຫຼື ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບການປະຕິບັດນະໂຍບາຍອື່ນຕາມລະບຽບກົດໝາຍ.

**ມາດຕາ 28 ມາດຕະການຕໍ່ລັດຖະກອນທີ່ກະທຳຜິດຕໍ່ໜ້າທີ່ຮັບຜິດຊອບ**

ລັດຖະກອນທີ່ກົດໜ່ວງ ຫຼື ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດວິໃນເຊັ່ນ: ສຶກສາອົບຮົມ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼື ໄລ່ອອກຈາກລັດຖະກອນ, ນອກຈາກນີ້ຍັງ ຈະໄດ້ປະຕິບັດ

ມາດຕະການຕ່າງໆທີ່ໄດ້ລະບຸໃນໝວດທີ 8 ຂອງກົດໝາຍອາຍາ ຕາມແຕ່ລະກໍລະນີ ແລະ ຕາມລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດອື່ນໆ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ ຕາມລະບຽບກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມອບໃຫ້ກົມມາດຕະຖານ ແລະ ວັດແທກ ສົມທົບກັບຂະແໜງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດຂອງຕົນ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ. ທຸກລະບຽບການທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ
ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ບໍ່ວຽງຄຳ ວົງດາລາ